**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ — ເລກທີ 4269 /ກປ

ນະຄອນຫຼວງວຽງຈັນ, ວັນທີ 10 OCT 2022

# ຄຳແນະນຳ

## ກ່ຽວກັບ ມາດຕະການປະຕິບັດ ສຳລັບ ການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຖືກຕ້ອງກັບເງື່ອນໄຂນຳເຂົ້າ ຂອງ ສະຫະພາບເອີຣົບ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ສະບັບເລກທີ 1617/ກປຝ, ລົງວັນທີ 16 ສິງຫາ 2022;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3679/ຫກ, ລົງວັນທີ 20 ກັນຍາ 2022.

ໃນໄລຍະຜ່ານມາ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ເວົ້າລວມ, ເວົ້າສະເພາະ ຂະແໜງການກະສິກຳ ແລະ ປ່າໄມ້ ກໍຄືດ່ານກັກກັນພືດ ໄດ້ເປັນເຈົ້າການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງກັບການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໄດ້ເປັນຢ່າງດີ ໂດຍສະເພາະການຈັດຕັ້ງປະຕິບັດມາດຕະການດ້ານສຸຂານາໄມພືດ ສຳລັບ ການສົ່ງອອກ, ສົ່ງອອກຕໍ່ ແລະ ສົ່ງຜ່ານ ອັນໄດ້ເຮັດໃຫ້ການ ຄຸ້ມຄອງ, ສົ່ງເສີມ ແລະ ອຳນວຍຄວາມສະດວກດ້ານການຄ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຂອງ ສປປ ລາວ ມີທ່າຂະຫຍາຍຕົວດີຂຶ້ນເລື້ອຍໆ; ແຕ່ຄຽງຄູ່ກັນນັ້ນ ກໍຍັງມີບາງບັນຫາທີ່ກົດໝາຍ ແລະ ນິຕິກຳ ກ່ຽວຂ້ອງ ບໍ່ທັນໄດ້ກຳນົດລະອຽດ ໂດຍສະເພາະ ການປະຕິບັດໃນກໍລະນີສົ່ງອອກທີ່ບໍ່ຖືກຕ້ອງກັບເງື່ອນໄຂຂອງປະເທດນຳເຂົ້າ ຊຶ່ງເຄີຍເກີດມາແລ້ວ ແລະ ມີຄວາມສ່ຽງທີ່ຈະເກີດຂຶ້ນອີກໃນຕໍ່ໜ້າ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ໃຫ້ສອດຄ່ອງກັບເຕັກນິກ ແລະ ລະບຽບກົດໝາຍ ຂອງ ສປປ ລາວ ນັ້ນ,

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

### I. ຈຸດປະສົງ ແລະ ລະດັບຄາດໝາຍ

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ຂັ້ນຕອນ ແລະ ມາດຕະການປະຕິບັດ ສຳລັບ ການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຖືກຕ້ອງກັບເງື່ອນໄຂນຳເຂົ້າຂອງສະຫະພາບເອີຣົບ ເພື່ອຮັບປະກັນຄວາມເປັນເອກະພາບໃນການປະຕິບັດ ໃນຂອບເຂດທົ່ວປະເທດ ທັງສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

## II. ຄວາມໝາຍ ແລະ ຄວາມສຳຄັນຂອງ ມາດຕະການປະຕິບັດ ສຳລັບ ການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຖືກຕ້ອງກັບເງື່ອນໄຂນຳເຂົ້າ ຂອງ ສະຫະພາບເອີຣົບ

ມາດຕະການປະຕິບັດ ສຳລັບ ການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຖືກຕ້ອງ ກັບເງື່ອນໄຂຂອງສະຫະພາບເອີຣົບ (EU) ແມ່ນ ການຈັດຕັ້ງປະຕິບັດມາດຕະການສຸຂານາໄມພືດ ໃນກໍລະນີ ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງບັນດາປະເທດສະຫະພາບເອີຣົບ (EU) ໄດ້ແຈ້ງເຕືອນຢ່າງເປັນທາງການ ກ່ຽວກັບ ຂໍ້ບົກພ່ອງທີ່ບໍ່ສອດຄ່ອງໃນການຢັ້ງຢືນສຸຂານາໄມພືດ ເຊັ່ນ: ບໍ່ສອດຄ່ອງກັບຂໍ້ກຳນົດດ້ານສຸຂານາໄມພືດຂອງປະເທດນຳເຂົ້າ, ມີການກວດພົບສັດຕູພືດຄວບຄຸມ, ການນຳເຂົ້າໂດຍບໍ່ມີເອກະສານຄົບຖ້ວນ ແລະ ບໍ່ຖືກຕ້ອງຕາມລະບຽບການ (ບໍ່ມີໃບຢັ້ງຢືນສຸຂານາໄມພືດ, ປ່ຽນແປງຂໍ້ມູນໃບຢັ້ງຢືນ, ປະລິມານ, ນໍ້າໜັກ ຫຼື ຂໍ້ມູນລາຍລະອຽດຕົວຈິງ ບໍ່ໄດ້ແຈ້ງໃນໃບຢັ້ງຢືນສຸຂາໄມພືດ ຫຼື ປອມແປງໃບຢັ້ງຢືນສຸຂານາໄມພືດ), ເປັນຊຸດສິນຄ້າຕ້ອງຫ້າມ, ມີການປົນເປື້ອນວັດຖຸຕ້ອງຫ້າມໃນຊຸດສິນຄ້າ ລວມທັງ ມີຫຼັກຖານໃນການຮົມຢາທີ່ບໍ່ຖືກຕ້ອງຕາມເຕັກນິກວິຊາການ ແລະ ລະບຽບກົດໝາຍກຳນົດ.

ມາດຕະການປະຕິບັດ ສຳລັບ ການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຖືກຕ້ອງກັບເງື່ອນໄຂຂອງສະຫະພາບເອີຣົບ (EU) ມີຄວາມສຳຄັນຕໍ່ພາກລັດ ແລະ ຜູ້ປະກອບການຂອງ ສປປ ລາວ ແລະ ປະເທດຄູ່ການຄ້າ ໃນການຈັດຕັ້ງປະຕິບັດມາດຕະການສຸຂານາໄມພືດ ເພື່ອປົກປ້ອງການຜະລິດກະສິກຳ ແລະ ອຳນວຍຄວາມສະດວກທາງດ້ານການຄ້າ ບົນພື້ນຖານກົດໝາຍຂອງ ສປປ ລາວ ແລະ ລະບຽບການນຳເຂົ້າ ຂອງສະຫະພາບເອີຣົບ (EU) ແນໃສ່ຮັກສາສຸຂານາໄມພືດ, ປົກປັກຮັກສາສິ່ງແວດລ້ອມ, ສົ່ງເສີມການຜະລິດເປັນສິນຄ້າຕາມທິດ ສະອາດ, ສີຂຽວ ແລະ ຍືນຍົງ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

## III. ຫຼັກການ, ເງື່ອນໄຂ ແລະ ຂັ້ນຕອນ ສຳລັບ ມາດຕະການປະຕິບັດ ຕໍ່ການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຖືກຕ້ອງກັບເງື່ອນໄຂນຳເຂົ້າ ຂອງ ສະຫະພາບເອີຣົບ

### 1. ຫຼັກການ

ມາດຕະການປະຕິບັດ ຕໍ່ການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຖືກຕ້ອງກັບເງື່ອນໄຂຂອງສະຫະພາບເອີຣົບ (EU) ຕ້ອງຮັບປະກັນຫຼັກການ ດັ່ງນີ້:

1) ສອດຄ່ອງກັບ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016 ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ ລວມທັງ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2) ດຳເນີນການຕາມຂັ້ນຕອນ ຈາກເບົາຫາໜັກ ແລະ ນຳໃຊ້ມາດຕະການດ້ານວິຊາການ ແລະ ລະບຽບກົດໝາຍເທົ່າທີ່ຈຳເປັນ, ທັງຮັບປະກັນຄວາມໂປ່ງໃສໃນການຈັດຕັ້ງປະຕິບັດ;
3) ຮັບປະກັນຜົນປະໂຫຍດຂອງ ຊາດ, ຜູ້ປະກອບການ ແລະ ປະເທດຄູ່ການຄ້າ.

### 2. ເງື່ອນໄຂ

ເງື່ອນໄຂ ສຳລັບ ການນຳໃຊ້ມາດຕະການປະຕິບັດ ຕໍ່ການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໃຫ້ຖືກຕ້ອງກັບເງື່ອນໄຂຂອງສະຫະພາບເອີຣົບ (EU) ມີດັ່ງນີ້:

1) ມີການແຈ້ງເຕືອນຢ່າງເປັນທາງການ ຂອງສະຫະພາບເອີຣົບ (EU) ກ່ຽວກັບ ຂໍ້ບົກພ່ອງທີ່ບໍ່ສອດຄ່ອງໃນການຢັ້ງຢືນສຸຂານາໄມພືດ;
2) ມີການລະເມີດລະບຽບກົດໝາຍ ຂອງ ສປປ ລາວ.

## 3. ຂັ້ນຕອນ

ສະຫະພາບເອີຣົບ (EU) ຈະແຈ້ງເຕືອນຢ່າງເປັນທາງການ ເຖິງ ສປປ ລາວ ກ່ຽວກັບ ຂໍ້ບົກພ່ອງ ໃນການຈັດຕັ້ງປະຕິບັດຂໍ້ກຳນົດເງື່ອນໄຂການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໂດຍໃຫ້ປະຕິບັດຕາມຂັ້ນຕອນດ້ານວິຊາການ ແລະ ລະບຽບກົດໝາຍ ດັ່ງນີ້:

### 1) ການແຈ້ງໃຫ້ເປົ້າໝາຍຊາບ

ກົມປູກຝັງ ເປັນຜູ້ແຈ້ງໃຫ້ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຫຼື ຜູ້ສົ່ງອອກຊຸດສິນຄ້າ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກຳນົດ ສາມ ວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືແຈ້ງເຕືອນຈາກສະຫະພາບເອີຣົບ (EU) ໂດຍບົ່ງບອກເຖິງຄວາມບໍ່ສອດຄ່ອງກັບ ຂໍ້ກຳນົດເງື່ອນໄຂການນຳເຂົ້າຂອງສະຫະພາບເອີຣົບ (EU) ຫຼື ຂໍ້ກຳນົດເງື່ອນໄຂປະເທດນຳເຂົ້າ ພ້ອມທັງແນະນຳລະບຽບການໃນການຈັດຕັ້ງປະຕິບັດທີ່ສອດຄ່ອງ ແລະ ໃຫ້ໂຈະການອອກໃບຢັ້ງຢືນສຸຂານາໄມພືດ ຈົນກວ່າຈະແກ້ໄຂສຳເລັດ.

### 2) ການແກ້ໄຂການແຈ້ງເຕືອນ

ພາຍຫຼັງໄດ້ຮັບແຈ້ງ ຈາກກົມປູກຝັງ ກ່ຽວກັບ ການແຈ້ງເຕືອນຈາກສະຫະພາບເອີຣົບ (EU), ຜູ້ສົ່ງອອກ ຕ້ອງກຳນົດມາດຕະການແກ້ໄຂຂໍ້ບົກພ່ອງດັ່ງກ່າວຢ່າງຈະແຈ້ງ ເປັນຕົ້ນ ໜ້າວຽກ ແລະ ວິທີການຈັດຕັ້ງປະຕິບັດ, ຜູ້ຈັດຕັ້ງປະຕິບັດ ແລະ ໄລຍະເວລາ ພ້ອມທັງຈັດຕັ້ງປະຕິບັດ ແລະ ການປະເມີນຜົນສຳເລັດໃນການຈັດຕັ້ງປະຕິບັດບັນດາມາດຕະການດັ່ງກ່າວ ແລ້ວລາຍງານຄືນເຖິງ ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ກ່ຽວກັບ ສິ່ງທີ່ໄດ້ປະຕິບັດ ເພື່ອເປັນຂໍ້ມູນໃຫ້ແກ່ເຈົ້າໜ້າທີ່ກັກກັນພືດ ແລະ ພາກສ່ວນກ່ຽວຂ້ອງ ໃນການກວດສອບການແກ້ໄຂບັນຫາດັ່ງກ່າວໃນຂັ້ນຕໍ່ໄປ.

ໃນກໍລະນີການແກ້ໄຂການແຈ້ງເຕືອນດັ່ງກ່າວ ຫາກມີຄວາມຈຳເປັນໃຊ້ຫຼາຍວິທີການ ແລະ ນຳໃຊ້ເວລາຫຼາຍກວ່າ ໜຶ່ງ ເດືອນ, ຜູ້ສົ່ງອອກ ຕ້ອງລາຍງານ ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຢ່າງເປັນປົກກະຕິທຸກເດືອນ ເພື່ອຊາບ ແລະ ມີວິທີການຊ່ວຍເຫຼືອຢ່າງທັນການ.

### 3) ການກວດສອບຜົນການແກ້ໄຂການແຈ້ງເຕືອນ

ພາຍຫຼັງໄດ້ຮັບໜັງສືລາຍງານຈາກຜູ້ສົ່ງອອກ, ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕ້ອງດຳເນີນການກວດສອບຫາສາເຫດຂອງຂໍ້ບົກພ່ອງດັ່ງກ່າວ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືລາຍງານຜົນການແກ້ໄຂການແຈ້ງເຕືອນຈາກຜູ້ສົ່ງອອກ ໂດຍມີການ ແຕ່ງຕັ້ງເຈົ້າໜ້າທີ່ກັກກັນພືດເພື່ອລົງກວດກາ, ກະກຽມກວດກາ, ດຳເນີນການກວດກາ, ສະຫຼຸບຜົນຂອງການກວດກາ ແລະ ລາຍງານຜົນຂອງການກວດກາ. ໃນກໍລະນີຈຳເປັນ ຫຼື ມີການຮ້ອງຂໍຈາກປະເທດນຳເຂົ້າ ເພື່ອກວດກາດ້ານສຸຂານາໄມພືດ ຮ່ວມກັບພາກພື້ນ ແລະ ສາກົນ, ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ສາມາດດຳເນີນການໄດ້ ບົນພື້ນຖານການຕົກລົງເຫັນດີ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.

ຄະນະທີ່ໄດ້ຮັບການແຕ່ງຕັ້ງໃຫ້ກວດສອບຜົນການແກ້ໄຂການແຈ້ງເຕືອນດັ່ງກ່າວ ຕ້ອງລາຍງານຜົນຂອງການກວດກາ ໃຫ້ການຈັດຕັ້ງຂອງຕົນ ເພື່ອພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ສະບັບເລກທີ 41/ສພຊ, ລົງວັນທີ 16 ພະຈິກ 2017 ແລະ ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016 ພ້ອມທັງໃຫ້ ກົມປູກຝັງ ແຈ້ງຜົນຂອງການແກ້ໄຂການແຈ້ງເຕືອນຂໍ້ບົກພ່ອງດັ່ງກ່າວ ໄປຍັງສະຫະພາບເອີຣົບ (EU) ຕາມຂັ້ນຕອນ. ໃນກໍລະນີ ມີການຮ້ອງຂໍບົດລາຍງານຜົນຂອງການກວດສອບ ແລະ ມາດຕະການແກ້ໄຂຂອງຜູ້ສົ່ງອອກ, ກົມປູກຝັງ ຕ້ອງສະໜອງສຳເນົາເອກະສານດັ່ງກ່າວຢ່າງຄົບຊຸດໃຫ້ແກ່ສະຫະພາບເອີຣົບ (EU) ແລະ ປະເທດນຳເຂົ້າ.

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານອື່ນທີ່ກ່ຽວຂ້ອງກັບການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຖືກຕ້ອງກັບ

ເງື່ອນໄຂຂອງປະເທດນຳເຂົ້າ ຢ່າງໜ້ອຍ ຫ້າ ປີ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 27 ຂອງຂໍ້ຕົກລົງວ່າດ້ວຍ ການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ສະບັບເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019.

**4) ການນຳໃຊ້ມາດຕະການຕໍ່ຜູ້ລະເມີດ**

ໂດຍອີງຕາມການແຈ້ງເຕືອນ ກ່ຽວກັບ ຄວາມບົກພ່ອງຂອງການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຖືກຕ້ອງກັບເງື່ອນໄຂນຳເຂົ້າຂອງ ສະຫະພາບເອີຣົບ (EU) ແລະ ຜົນການກວດສອບການແກ້ໄຂດັ່ງກ່າວ, ຫາກພົບເຫັນການລະເມີດ ແມ່ນໃຫ້ນຳໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມລະດັບ ຫຼື ພຶດຕິກຳຂອງການລະເມີດ ດັ່ງນີ້:

**4.1. ການສຶກສາອົບຮົມ**

ຫາກພົບເຫັນການລະເມີດທີ່ບໍ່ຮ້າຍແຮງ ແລະ ບໍ່ເປັນການກະທຳຜິດທາງອາຍາ ເຊັ່ນ: ປະລິມານ, ນ້ຳໜັກ ຫຼື ຂໍ້ມູນລາຍລະອຽດຕົວຈິງ ບໍ່ໄດ້ແຈ້ງໃນໃບສະເໜີຂໍໃບຢັ້ງຢືນສຸຂານາໄມພືດ ແມ່ນໃຫ້ແຈ້ງໃຫ້ຜູ້ສົ່ງອອກຊາບ ເຖິງສິ່ງທີ່ກວດພົບ ແລະ ສັ່ງໃຫ້ຄັດແຍກວັດຖຸທີ່ບໍ່ໄດ້ແຈ້ງ ຫຼື ບໍ່ຖືກຕ້ອງກັບໃບສະເໜີ ສຳລັບຊຸດສິນຄ້າດັ່ງກ່າວ ເພື່ອໃຫ້ຖືກຕ້ອງຕາມຂໍ້ກຳນົດເງື່ອນໄຂຂອງປະເທດນຳເຂົ້າ ກ່ອນອອກໃບຢັ້ງຢືນສຸຂານາໄມພືດ ພ້ອມທັງສຶກສາອົບຮົມຜູ້ລະເມີດ ໃຫ້ຮູ້ໄດ້ເຖິງລະບຽບກົດໝາຍທີ່ກ່ຽວຂ້ອງ ລວມທັງສິດ, ພັນທະຂອງຜູ້ສົ່ງອອກພືດ ແລະ ເຮັດບົດບັນທຶກການສຶກສາອົບຮົມຮ່ວມກັບຜູ້ລະເມີດ.

ໃນກໍລະນີເປັນການລະເມີດຄັ້ງທີສອງ ພາຍໃນ ສາມສິບ ວັນ ນັບແຕ່ການລະເມີດຄັ້ງທຳອິດ ແມ່ນບໍ່ອະນຸຍາດໃຫ້ອອກໃບຢັ້ງຢືນສຸຂານາໄມພືດ ແລະ ໃຫ້ຜູ້ສົ່ງອອກ ຍື່ນໃບສະເໜີຄືນໃໝ່ ໂດຍມີການກວດກາທຸກຕູ້ຄອນເທນເນີ ແລະ ຢັ້ງຢືນຕິດຕໍ່ກັນ ຫ້າ ຄັ້ງ ເປັນເວລາຢ່າງໜ້ອຍ ສາມ ເດືອນ ແລະ ຖ້າມີການລະເມີດເປັນອາຈິນ ຫຼື ລະເມີດຕິດຕໍ່ກັນ ສິບ ຄັ້ງ ພາຍໃນ ສາມ ເດືອນ ແມ່ນບໍ່ອະນຸຍາດໃຫ້ອອກໃບຢັ້ງຢືນສຸຂານາໄມພືດ ພ້ອມທັງປັບໃໝຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 4.2 ຂອງຄຳແນະນຳສະບັບນີ້.

**4.2. ມາດຕະການປັບໃໝ**

ໃຫ້ນຳໃຊ້ຕໍ່ຜູ້ລະເມີດ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 85 ຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016. ສຳລັບ ການຄິດໄລ່ມູນຄ່າປັບໃໝ ແມ່ນໃຫ້ປັບໃໝໜຶ່ງເທົ່າຂອງມູນຄ່າພືດ ຫຼື ພັນທະອື່ນ ທີ່ຜູ້ສົ່ງອອກຕ້ອງປະຕິບັດ.

ໃນກໍລະນີເປັນການລະເມີດຄັ້ງທີສອງ ຫຼື ເປັນອາຈິນ ແລະ ເຄີຍຖືກປັບໃໝມາແລ້ວໃນລັກສະນະດຽວກັນ ແມ່ນໃຫ້ປັບໃໝສອງເທົ່າຂອງມູນຄ່າ ພືດ ຫຼື ພັນທະອື່ນທີ່ຜູ້ສົ່ງອອກຕ້ອງປະຕິບັດ ພ້ອມທັງສະເໜີພາກສ່ວນກ່ຽວຂ້ອງ ພິຈາລະນາ ຖອນໃບອະນຸຍາດດຳເນີນກິດຈະການຂອງຜູ້ກ່ຽວ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ.

**4.3. ມາດຕະການທາງແພ່ງ**

ການລະເມີດລະບຽບການສຸຂານາໄມພືດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຊຶ່ງໄດ້ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

ສຳລັບ ການລະເມີດທີ່ສ້າງຄວາມເສຍຫາຍໃຫ້ແກ່ລັດ, ໃຫ້ ເຈົ້າໜ້າທີ່ກັກກັນພືດ ປຶກສາຫາລືປະນີປະນອມກັບຜູ້ລະເມີດ ຊອກຫາເງື່ອນໄຂ ແລະ ວິທີການທີ່ສາມາດຕົກລົງກັນໄດ້ດ້ວຍດີ ເພື່ອທວງເອົາການໃຊ້ແທນຄ່າເສຍຫາຍ ບົນພື້ນຖານຜົນປະໂຫຍດສູງສຸດຂອງລັດ. ໃນກໍລະນີ ບໍ່ສາມາດ

ຕົກລົງກັນໄດ້ ຈຶ່ງດໍາເນີນການຂຽນຄໍາຮ້ອງຟ້ອງ ຕາມແບບພິມຂອງສານປະຊາຊົນ ກໍານົດ ແລະ ປະກອບເອກະສານຄົບຊຸດ ເພື່ອສະເໜີຫາ ສານປະຊາຊົນທີ່ມີສິດອໍານາດ ພິຈາລະນາຕັດສິນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ວ່າດ້ວຍການດໍາເນີນຄະດີແພ່ງ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 04 ກໍລະກົດ 2012.

**4.4. ມາດຕະການທາງອາຍາ**

ການລະເມີດລະບຽບການສຸຂານາໄມພືດ ຊຶ່ງຖືເປັນການກະທໍາຜິດທາງອາຍາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 293, 297, 295, 373 ແລະ 374 ຂອງປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017 ມີດັ່ງນີ້:

- ການເຄື່ອນຍ້າຍ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມໂດຍບໍ່ໄດ້ຮັບອະນຸຍາດຈາກພື້ນທີ່ ທີ່ມີການລະບາດຂອງສັດຕູພືດ ໄປຍັງພື້ນທີ່ອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງຂອງລັດ (ອົງການປ້ອງກັນ ແລະ ກັກກັນພືດ ຕາມການແບ່ງຂັ້ນຄຸ້ມຄອງ) ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ໜຶ່ງ ປີ ແລະ ປັບໃໝ ແຕ່ ຫ້າລ້ານ ຫາ ສິບລ້ານ ກີບ ແລະ ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງ ປີ ຫາ ສາມປີ ແລະ ປັບໃໝ ແຕ່ ເຈັດລ້ານ ຫາ ສິບຫ້າລ້ານ ກີບ;
- ການລັກລອບນໍາເຂົ້າ, ສົ່ງອອກ ຫຼື ນໍາພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມຜ່ານ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງຂອງລັດ (ອົງການປ້ອງກັນ ແລະ ກັກກັນພືດ ຕາມການແບ່ງຂັ້ນຄຸ້ມຄອງ) ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ໜຶ່ງ ປີ ແລະ ປັບໃໝ ແຕ່ ຫ້າລ້ານ ຫາ ສິບລ້ານ ກີບ ແລະ ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງ ປີ ຫາ ສາມ ປີ ແລະ ປັບໃໝ ແຕ່ ສິບລ້ານ ຫາ ສາມສິບລ້ານ ກີບ;
- ການຈໍາໜ່າຍ, ແຈກຢາຍ ຫຼື ເກັບຮັກສາ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມທີ່ຕິດແປດສັດຕູພືດຄວບຄຸມ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ໜຶ່ງ ປີ ແລະ ປັບໃໝ ແຕ່ ຫ້າລ້ານ ຫາ ສິບລ້ານ ກີບ ແລະ ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງ ປີ ຫາ ສາມ ປີ ແລະ ປັບໃໝ ແຕ່ ສິບລ້ານ ຫາ ສາມສິບລ້ານ ກີບ;
- ການທໍາລາຍ ແລະ ຊຸກເຊື່ອງເອກະສານກ່ຽວກັບໃບຢັ້ງຢືນສຸຂານາໄມພືດ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ໜຶ່ງ ປີ ແລະ ປັບໃໝ ແຕ່ ໜຶ່ງ ລ້ານ ຫາ ສິບລ້ານ ກີບ;
- ການປອມແປງເອກະສານ ຫຼື ໃບຢັ້ງຢືນສຸຂານາໄມພືດ (ປອມແປງລາຍເຊັນ, ຕາປະທັບ, ຕັດ ຫຼື ເພີ່ມຂໍ້ຄວາມໃສ່ ໃບຢັ້ງຢືນສຸຂານາໄມພືດ) ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ສອງ ປີ ແລະ ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ປັບໃໝ ແຕ່ ເຈັດລ້ານ ຫາ ຊາວລ້ານ ກີບ;
- ການໃຊ້ເອກະສານປອມ (ຮູ້ວ່າໃບຢັ້ງຢືນສຸຂານາໄມພືດປອມ ແຕ່ຍັງນໍາໃຊ້) ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ສອງ ປີ ແລະ ປັບໃໝ ແຕ່ ສາມລ້ານ ຫາ ສິບລ້ານ ກີບ ແລະ ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງ ປີ ຫາ ຫ້າ ປີ ແລະ ປັບໃໝ ແຕ່ ເຈັດ ລ້ານ ຫາ ຊາວລ້ານ ກີບ.

ໃນການດໍາເນີນຄະດີອາຍາຕໍ່ຜູ້ລະເມີດ, ໃຫ້ ເຈົ້າໜ້າທີ່ກັກກັນພືດ ສົມທົບກັບ ເຈົ້າໜ້າທີ່ຕໍາຫຼວດ ເພື່ອສືບສວນ-ສອບສວນ ແລະ ປະກອບສໍານວນຄະດີ ສົ່ງອົງການໄອຍະການປະຊາຊົນ ໒.໑໔

ບ່ອນທີ່ມີການລະເມີດ ເພື່ອພິຈາລະນາ ສັ່ງຟ້ອງຂຶ້ນສານ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ວ່າດ້ວຍການດໍາເນີນຄະດີອາຍາ (ສະບັບປັບປຸງ) ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017.

**4.5. ມາດຕະການໂທດເພີ່ມ**

ການນໍາໃຊ້ມາດຕະການໂທດເພີ່ມ ຕໍ່ຜູ້ລະເມີດລະບຽບກົດໝາຍກ່ຽວກັບການປ້ອງກັນ ແລະ ການກັກກັນພືດ ປະກອບດ້ວຍ ການໂຈະ ຫຼື ຖອນໃບອະນຸຍາດດໍາເນີນກິດຈະການກະສິກໍາ ແລະ ປ່າໄມ້, ໃບທະບຽນວິສາຫະກິດ ລວມທັງ ການຮິບຊັບ-ວັດຖຸສິ່ງຂອງ ຊຶ່ງເປັນມາດຕະການບັງຄັບຂອງລັດເພື່ອຈໍາກັດ, ຕັດສິດ ແລະ ຜົນປະໂຫຍດຂອງຜູ້ກະທໍາຜິດ ຊຶ່ງໄດ້ກໍານົດໄວ້ໃນ ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017, ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016 ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## IV. ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

1. ໃຫ້ ກົມປູກຝັງ, ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ແລະ ດ່ານກັກກັນພືດ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ເປັນເຈົ້າການ ຊຸກຍູ້ ແລະ ຊີ້ນໍາ ຂະແໜງປູກຝັງແລະ ດ່ານກັກກັນພືດ ສົມທົບພາກສ່ວນກ່ຽວຂ້ອງຂັ້ນທ້ອງຖິ່ນ ເພື່ອປະຕິບັດມາດຕະການຕໍ່ຜູ້ລະເມີດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ຄໍາແນະນໍາສະບັບນີ້;
3. ຜ່ານການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານ ກົມປູກຝັງ ແລະ ກະຊວງກະສິກໍາ ແລະ ປ່າໄມ້ ຕາມຂັ້ນຕອນ ເພື່ອພິຈາລະນາແກ້ໄຂຢ່າງທັນການ.

ຄໍາແນະນໍາສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ. ໑໒໒

**ລັດຖະມົນຕີ**

ກະຊວງກະສິກໍາ ແລະ ປ່າໄມ້ ລັດຖະມົນຕີ

**ປອ. ເພັດ ພົມພິພັກ**